*Souphanouvong University Journal of Multidisciplinary Research and Development*
**2024,Vol. 10, No. 1, 250-258**
**https://doi.org/10.69692/SUJMRD1001250**

# ການໃຫ້ບໍລິການລ່ອງເຮືອນຳທ່ຽວຕາມແມ່ນ້ຳຂອງ ນະຄອນຫຼວງພະບາງ ແຂວງ ຫຼວງພະບາງ

**ກອງແກ້ວ ສຸກັນຍາ[1*], ແພງພັນ ສຸທິວົງ[1], ເບີ້ນ ດອນສະຫວັນ[1], ສີຊົມພູ ອິນທະລືໄຊ[1], ປະຊິນ ບົວພາແກ້ວ[1], ແລະ ດວງຕາ ບົວພາວົງ[2]**

*ພາກວິຊາຊັບພະຍາກອນປ່າໄມ້, ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

[1*] ***ຕິດຕໍ່ພົວພັນ:*** *ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລສຸພານຸວົງ, ເບີໂທ: +856 20 5447 7770, ອີເມວ: kongkeosoukanya632@gmail.com*

[1] *ພາກວິຊາ ຊັບພະຍາກອນປ່າໄມ້ ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລ ສຸພານຸວົງ*

[2] *ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລ ແຫ່ງຊາດລາວ*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 22 ກັນຍາ 2023*
*ການປັບປຸງ: 03 ມີນາ 2024*
*ການຕອບຮັບ: 21 ມີນາ 2024*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ ແມ່ນຄົ້ນຄວ້າກ່ຽວກັບ ການໃຫ້ບໍລິການເຮືອນາທ່ຽວຕາມແມ່ນ້ຳຂອງ ສະມາຄົມເຮືອແຂວງ ຫຼວງພະບາງມີ 3 ສະຖານທີ່: ທ່າເຮືອບ້ານດອນໃໝ່, ທ່າເຮືອຫຼວງ ແລະ ທ່າເຮືອວັດໜອງ. ກໍລະນີສຶກສາທ່າເຮືອ ວັດໜອງ ມີຈຸດປະສົງ ເພື່ອສຶກສາຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການໃຫ້ບໍລິການເຮືອນຳທ່ຽວຕາມແມ່ລຳນ້ຳຂອງ. ເປັນການສຶກສາແບບທັງປະລິມານ ແລະ ຄຸນນະພາບໃນການຮວບຮ່ວມເອົາຂໍ້ມູນແບບສອບຖາມຈຳນວນ 180 ສະບັບ, ນຳໃຊ້ສະຖິຕິການພັນລະນາ ແລະ ການໃຫ້ຄວາມໝາຍຕົວຈິງແມ່ນໄດ້ມາຈາກການວິເຄາະຂໍ້ມູນ ເພື່ອໃຫ້ມີຄວາມຖືກຕ້ອງ ແລະ ຊັດເຈນ.

ຜົນການສຶກສາຄວາມພໍໃຈຂອງນັກທ່ອງຕໍ່ການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ ຈາກການວິເຄາະຜົນການສຶກສາເຫັນວ່ານັກທ່ອງທ່ຽວມີຄວາມພໍໃຈທັງ 7 ດ້ານເຫັນວ່າ: ມີຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການຂອງເຮືອນຳທ່ຽວ ສະເລ່ຍ 3.98, ຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນຳທ່ຽວຢູ່ໃນລະດັບຫຼາຍ ສະເລ່ຍ 3.92, ມີການສະເໜີສິ່ງທີ່ເປັນຮູບປະທຳໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິການຢູ່ໃນລະດັບຫຼາຍ ສະເລ່ຍ 3.77, ການບໍລິການຂອງພະນັກງານຕໍ່ກັບຄວາມພໍໃຈຂອງນັກທ່ອງທ່ຽວຢູ່ໃນລະດັບຫຼາຍ ສະເລ່ຍ 3.66, ຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອຢູ່ໃນເລະດັບຫຼາຍ ສະເລ່ຍ 3.59, ຄວາມພໍໃຈຕໍ່ຄ່າບໍລິການອື່ນໆຂອງນັກທ່ອງທ່ຽວຢູ່ໃນລະດັບຫຼາຍ ສະເລ່ຍ 3.67 ແລະ ສິ່ງທີ່ຄວນປັບປຸງໃນການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງຢູ່ໃນລະດັບຫຼາຍ ສະເລ່ຍ 3.47 ນອກຈາກນີ້ລູກຄ້າຍັງສະເໜີໃຫ້ເຮັດແຜນທີເພື່ອບອກສະຖານທີ່ບໍລິການເຮືອເພື່ອຄວາມສະດວກສະບາຍ, ການໃຫ້ຂໍ້ມູນຕະຫຼອດໄລຍະເວລາເດີນທາງ ແລະ ປະຢັດເວລາໃນການຫາສະຖານທີ່.

**ຄຳສັບສຳຄັນ:** *ການລ່ອງເຮືອ, ແມ່ນ້ຳຂອງ*

# Mekhong Cruise Servicing along the Mekhong River in Luang Prabang Heritage City, Luang Prabang Province

**Kongkeo SOUKANYA[1]*, Phengphanh SOUTHIVONG[1],** Beun **DONSAVANH[1], Sysomphou INTHALEUXAY [1],** Pazeun BOUAPHAKEO[1] and Douangta BOUAPHAVONG[2]

*Department of Forest Resource, Faculty of Agriculture and Forest Resources, Souphanouvong University, Lao PDR*

*[1,*]**Correspondence**: kongkeo Soukanya[1]Department of Forest Resource, Faculty of Agriculture and Souphanouvong University. Tel: +856 20 5447 7770, E-mail: kongkeosoukanya632@gmail.com*

*[1]Department of Forest Resource, Faculty of Agriculture and Forest Resources, Souphanouvong University.*

*[2]Faculty of Forest Science, National University of Laos*

***Article Info:***
*Submitted: Sep 22, 2023*
*Revised: Mar 03, 2024*
*Accepted: Mar 21, 2024*

**ABSTRACT**

This research study to providing boat tours along the river. The Luang Prabang Provincial Boat Association has 3 locations: Ban Don Nui Port, Luang Port and Wat Nong Port. The case study of Wat Nong Port which includes to study the satisfaction of tourists to the service of guided tours along the Mekong River. It is a quantitative and qualitative study in collecting data from 180 questionnaires, using descriptive statistics and giving actual meaning from data analysis to be accurate and precise.

The results of the study on the satisfaction of tourists to the service of guided boats along the Mekong River from the analysis of the results of the study shows that tourists are satisfied with all 7 aspects: there is satisfaction of tourists to the service of the guided boat, an average of 3.98, the confidence of customers in the service of the guided boat is at a very high level, an average of 3.92, there are physical things offered to tourists who come to use the service at a very high level, an average of 3.77, the service of the staff towards the satisfaction of the tourists is at a high level, an average of 3.66, the satisfaction of the service of the staff inside the boat is at a very high level Average 3.59, satisfaction with other service charges of tourists is at a high level, average 3.67 and things that should be improved in the service of boat tours along the Mekong River at a high level, average 3.47. Also, the customer also offers to make a map to show the location of the boat service for convenience, providing information throughout the travel period and saving time in finding the place.

**Keywords:** *Cruise, Mekong River*

## 1. ພາກສະເໜີ

ການທ່ອງທ່ຽວເປັນອຸດສາຫະກຳໜຶ່ງທີ່ມີການຂະຫຍາຍຕົວຢ່າງວ່ອງໄວ ແລະ ກວ້າງຂວາງຢູ່ບັນດາປະເທດໃນໂລກ. ໃນຍຸກປັດຈຸບັນ, ຫຼາຍປະເທດໃນໂລກໄດ້ເອົາໃຈໃສ່ເປັນພິເສດຕໍ່ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ແລະ ຖືເປັນຂະແໜ່ງການເສດຖະກິດປາຍແຫຼມເພື່ອພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງປະເທດຕົນ. ການຕີລາຄາການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວຍັງມີສາເຫດທີ່ພາໃຫ້ມີຈຸດອ່ອນ ຫຼື ຂໍ້ຄົງຄ້າງ ຍ້ອນລະບົບການ ຈັດຕັ້ງ, ບຸກຄະລາກອນຂັ້ນແຂວງ ແລະ ຂັ້ນເມືອງບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ; ບຸກຄະລາກອນສ່ວນໃຫຍ່ບໍ່ມີວິຊາສະເພາະດ້ານການ ທ່ອງທ່ຽວ; ແບບແຜນວິທີເຮັດວຽກຍັງບໍ່ຈະແຈ້ງ , ການແບ່ງງານຍັງບໍ່ຖືກກັບວິຊາສະເພາະ ແລະ ຄວາມສາມາດ; ພະນັກງານບາງສ່ວນຍັງຂາດປະສົບການ ແລະ ຫົວຄິດປະດິດສ້າງ, ການປະຕິບັດໜ້າທີ່ວຽກງານ ຍັງຂາດການເຮັດວຽກງານແບບເປັນໝູ່ຄະນະ; ການຮ່ວມມືລະຫວ່າງລັດ ແລະ ເອກະຊົນຍັງເຮັດບໍ່ໄດ້ດີ; ລັດບໍ່ມີ

ງົບປະມານພຽງພໍໃນການສ້າງບຸກຄະລາກອນ ແລະ ພັດທະນາແຫຼ່ງທ່ອງທ່ຽວ.

ການທ່ອງທ່ຽວເຮືອສຳລານ ມີການຂະຫຍາຍຕົວຢ່າງບໍ່ເນື່ອງ ຈາກສະຖິຕິຈານວນນັກທ່ອງທ່ຽວເຮືອສາລານຕັ້ງແຕ່ປີ ຄສ 1990 ຈົນເຖິງປະຈຸບັນພົບວ່າຈຳນວນນັກທ່ອງທ່ຽວເຮືອສຳລານມີການຂະຫຍາຍໂຕຢ່າງຕໍ່ເນື່ອງໃນທຸກພູມມີພາກໂດຍກາຍແຄິ່ງເປັນນັກທ່ອງທ່ຽວອາເມລິກາ, ຮອງມາແມ່ນຢູໂລບ ແລະ ມີສະຖານະການແນວໂນ້ມທີ່ຈະຂະຫຍາຍໂຕຕໍ່ໄປໃນອານາຄົດແມ່ນວ່າຈຳນວນນັກທ່ອງທ່ຽວເຮືອສຳລານໃນທະວີບອາຊີມີຈຳນວນບໍ່ຫຼາຍຖ້າປຽບທຽບພູມມີພາກອື່ນໆ ( ການທ່ອງທ່ຽວແຫ່ງປະເທດໄທ, 2558) ຈາກຂໍ້ມູນຂອງ Pacific Asia Travel Association (2014) ພົບວ່າສັດສ່ວນຈຳນວນຜູ້ໂດຍສານທີ່ເດີນທາງທ່ອງທ່ຽວດ້ວຍເຮືອສຳລານມີພຽງຮ້ອຍລະ 2.4 ແລະ ເພີ່ມຂຶ້ນເປັນຮ້ອຍລະ 3.3 ແລະ 4.4 ໃນ ຄສ 2013 ແລະ 2014 ຕາມລາດັບ (ອານຸພາບ ມີສິນ, 2019)

ການຄົມມະນາຄົມຂົນສົ່ງທາງນ້ຳກໍໄດ້ເລີ່ມມີຄວາມສຳຄັນຕໍ່ການທ່ອງທ່ຽວ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ມາທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. ນະຄອນຫຼວງພະບາງເປັນເມືອງເອກຂອງແຂວງຫຼວງພະບາງເປັນເມືອງແຫ່ງການທ່ອງທ່ຽວທີ່ມີຊື່ສຽງທາງດ້ານວັດທະນະທຳ ແລະ ທຳມະຊາດ ທີ່ສວຍສົດງົດງາມ, ນະຄອນ ຫຼວງພະບາງຍັງມີສະຖານທີ່ທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ. ດັ່ງນັ້ນຈຶ່ງໄດ້ມີການປັບປຸງດ້ານການບໍລິການໃຫ້ດີຂຶ້ນກວ່າເກົ່າ ໃຫ້ມີຄຸນນະພາບ ແລະ ພັດທະນາສິ່ງອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວອີກດ້ວຍ ເຊິ່ງຈະປະກອບດ້ວຍຫຼາຍພາກສ່ວນ ທັງລັດ ແລະ ເອກະຊົນ ຕ່າງກໍຊ່ວຍກັນຕອບສະໜອງຕາມຄວາມຕ້ອງການໃຫ້ແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດໄດ້ຕັ້ງແຕ່ສະໄໝກ່ອນຈົນຮອດປັດຈຸບັນ.

ການທ່ອງທ່ຽວໂລກໄດ້ກຳນົດເອົາວັນທີ 27 ກັນຍາຂອງທຸກໆປີເປັນ ວັນທ່ອງທ່ຽວໂລກ ໂດຍໄດ້ມີການຈັດການສະເຫຼີມສະຫຼອງຂຶ້ນ, ຈາກນັ້ນກໍໄດ້ກຳນົດເປັນບົດບັນຍັດເພື່ອພິຈາລະນາແຜນການພັດທະນາດ້ານການທ່ອງທ່ຽວສາກົນໃນອະນາຄົດ. ວັນທ່ອງທ່ຽວໂລກໄດ້ລົງເລິກໃຫ້ເຫັນບົດບາດ ແລະ ຄວາມສຳຄັນຂອງການທ່ອງທ່ຽວ ແລະ ຍັງສະແດງໃຫ້ເຫັນຜົນກະທົບທີ່ອາດເກີດຂຶ້ນຕໍ່ສັງຄົມ, ວັດທະນະທຳ ແລະ ມູນຄ່າທາງເສດຖະກິດທີ່ມີຕໍ່ການທ່ອງທ່ຽວໂລກອີກດ້ວຍ. (https://guru.sanook.com).

ນະຄອນຫຼວງພະບາງ ເປັນເມືອງເອກຂອງ ແຂວງຫຼວງພະບາງ ປະເທດລາວ, ຕັ້ງຢູ່ທາງພາກເໜືອຂອງປະເທດ ຕົວເມືອງຕັ້ງຢູ່ແຄມແມ່ນ້ຳຂອງ ແລະ ນ້ຳຄານເຊິ່ງໄຫຼມາພົບກັນບໍລິເວນນັ້ນເອີ້ນວ່າປາກຄານເປັນເມືອງທີ່ອົງການ UNESCO ( United Nations Educational, Scientific and Cultural Organization) ປະກາດເປັນເມືອງມໍລະດົກໂລກໃນວັນທີ 09 ທັນວາ 1995 ຢ່າງເປັນທາງການ. ເມື່ອບໍ່ດົນມານີ້ ທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີປະເທດລາວ ກໍໄດ້ເປັນປະທານເປີດປີທ່ອງທ່ຽວລາວ 2018 ຂຶ້ນຢູ່ທີ່ນະຄອນຫຼວງວຽງຈັນ ວັນທີ 28 ຕຸລາ 2018 ພາຍໃຕ້ຫົວຂໍ້: “ ການທ່ອງທ່ຽວລາວ ການຮຽນຮູ້ປະຫວັດສາດ, ການຄົ້ນຄວ້າທຳມະຊາດ, ການອານຸລັກ ແລະ ສົ່ງເສີມຄຸນຄ່າທາງດ້ານວັດທະນະທຳ “, (m.vovworld.vn).

ເນື່ອງຈາກວ່າວຽກງານການທ່ອງທ່ຽວທາງດ້ານການບໍລິການແກ່ນັກທ່ອງທ່ຽວມີຫຼາຍປະເພດ ແລະ ມີຫຼາຍລະບົບການບໍລິຫານຈັດການ, ມີການຈັດຕັ້ງວຽກງານ ແລະ ຈັດສັນແຫຼ່ງທ່ອງທ່ຽວມີຫຼາຍສິ່ງຫຼາຍປະເດັນທີ່ໜ້າສົນໃຈສຶກສາຮຽນຮູ້ກ່ຽວກັບການບໍລິການດ້ານການທ່ອງທ່ຽວນິເວດວິທະຍາ. ດັ່ງນັ້ນ, ໃນການສຶກສາຄັ້ງນີ້ຈຶ່ງມີຄວາມສົນໃຈທີ່ຈະສຶກສາການໃຫ້ບໍລິການເຮືອນຳທ່ຽວຕາມລຳນ້ຳຂອງໃຫ້ບໍລິການແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. ນອກນີ້ ຍັງສາມາດຮຽນຮູ້ປະເພດເຮືອໃຫ້ບໍລິການ, ລະບົບການຈັດແບ່ງເຮືອ ລວມທັງປະເພດລູກຄ້າທົ່ວໄປ ແລະ ລູກຄ້າທາງບໍລິສັດ. ບົດໂຄງການຂອງຂ້າພະເຈົ້າຈະບໍ່ສົມບູນຄົບຖ້ວນໄດ້ຖ້າຂາດການຮ່ວມມື ແລະ ຊີ້ແນະແນວທາງກ່ຽວກັບການຂຽນບົດໂຄງການຈາກພາກສ່ວນທີ່ກ່ຽວຂ້ອງກັບຫົວຂໍ້ ແລະ ຈຸດປະສົງນີ້ອີກດ້ວຍ.

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ 1) ສຶກສາສະພາບລວມການບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ, ແລະ 2) ສຶກສາຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການໃຫ້ບໍລິການເຮືອນຳທ່ຽວຕາມແມ່ລຳນ້ຳຂອງ.

## 2. ອຸປະກອນ ແລະ ວິທີການຄົ້ນຄວ້າ

### 2.1 ວິທີການຄົ້ນຄວ້າ

#### 2.1.1 ພາກຫ້ອງການ (ຂໍ້ມູນມືສອງ)

ແມ່ນການເອົາຂໍ້ມູນທີ່ມີຢູ່ແລ້ວທີ່ເຫັນວ່າມີຄວາມສຳຄັນ ແລະ ກ່ຽວຂ້ອງກັບບົດເພື່ອນຳມາເປັນຂໍ້ມູນພື້ນຖານຂອງການຄົ້ນຄວ້າ ແລະ ເປັນບົດອ້າງອີງໃຫ້ແກ່ບົດນີ້ ແລະ ໄດ້ມາຈາກເອກະສານຕ່າງໆຈາກຫໍສະໝຸດ, ຈາກຫ້ອງການ, ບົດລາຍງານຈົບຊັ້ນ, ຂໍ້ມູນທີ່ໄດ້ມາຈາກອິນເຕີເນັດ ແລະ ເອກະສານທີ່ກ່ຽວຂ້ອງອື່ນໆ.

#### 2.1.2 ພາກສະໜາມ (ຂໍ້ມູນມືໜຶ່ງ)

ເປັນຂໍ້ມູນທີ່ເກັບກຳ ແລະ ຮອບຮອມໄດ້ຈາກການສຳພາດ, ແບບສອບຖາມ ແລະ ການສັງເກດຈາກພຶດຕິກຳຂອງນັກທ່ອງທ່ຽວທີ່ມາໃຊ້ບໍລິການເຮືອນຳທ່ຽວແບບການມີສ່ວນຮ່ວມກັບນັກທ່ອງທ່ຽວອີກດ້ວຍ.

### 2.2 ການສຸ່ມປະຊາກອນຕົວຢ່າງ

ເນື່ອງຈາກການສຶກສາໃນຄັ້ງນີ້ມີປະຊາກອນຈຳນວນຫຼວງຫຼາຍ ຜູ້ສຶກສາຈຶ່ງຕ້ອງເລືອກ ນຳໃຊ້ເຕັກນິກການສຸ່ມຕົວຢ່າງທີ່ເປັນໄປຕາມໂອກາດທາງສະຖິຕິ ໂດຍກຳນົດເອົາການສຸ່ມຕົວຢ່າງແບບງ່າຍດາຍ ແລະ ບໍ່ຮູ້ຈຳນວນປະຊາກອນທີ່ແນ່ນອນ, ປະຊາກອນ ແລະ ກຸ່ມຕົວຢ່າງທີ່ນຳມາສຶກສາທີ່ມາໃຊ້ບໍລິການຂອງເຮືອນຳທ່ຽວເທົ່ານັ້ນ, ປະຊາກອນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ໄດ້ແກ່ລູກຄ້າທີ່ມາໃຊ້ບໍລິການຂອງເຮືອນຳທ່ຽວໃນເດືອນ ມີນາ ຫາ ເມສາ ເທົ່ານັ້ນ.

ໃນການວິໄຈຄັ້ງນີ້ແມ່ນໄດ້ໃຊ້ວິທີການນຳນົດກຸ່ມຕົວຢ່າງຈາກສູດ Yamane (1993) ທີ່ບໍ່ຮູ້ຈຳນວນປະຊາກອນທີ່ບໍ່ແນ່ນອນ, ຈະກຳນົດຕົວຢ່າງທີ່ເປັນນັກທ່ອງທ່ຽວຈາກປະຊາກອນທີ່ເປັນນັກທ່ອງທ່ຽວ. ຜູ້ສຶກສາໄດ້ລົງເກັບກຳຂໍ້ມູນດ້ວຍການແຈກຢາຍແບບສອບຖາມໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າມາໃຊ້ບໍລິການຂອງເຮືອນຳທ່ຽວຕາມລຳນ້ຳຂອງໃນຊ່ວງເດືອນ ກຸມພາ ຫາ ເມສາ 2019 (ສະຖິຕິຂອງເດືອນ ມີນາ ປີ 2019, ສະມາຄົມເຮືອທ່ອງທ່ຽວ) ການກຳນົດສູດປະຊາກອນຕົວຢ່າງໂດຍໃຊ້ສູດ:

ສູດ: $n = \frac{N}{1+Ne^2}$

n: ໝາຍເຖິງຂະໜາດປະຊາກອນຕົວຢ່າງ.

N: ໝາຍເຖິງຂະໜາດຂອງປະຊາກອນ.

e: ຄວາມຄາດເຄື່ອນທີ່ຍອມຮັບໄດ້ສ່ວນຫຼາຍມັກກຳນົດໃຫ້ເທົ່າກັບ 0.05.

Ex: (ຕົວຢ່າງການຄິດໄລ່ກຸ່ມປະຊາກອນຕົວຢ່າງ)

ອີງຕາມສູດ: $n = \frac{N}{1+Ne^2}$

ແທນໄດ້: $n = \frac{334}{1+(334\ X\ 0{,}05^2)}$=180

### 2.3 ການສຳພາດນັກທ່ອງທ່ຽວ

ໃນການສຳພາດນັກທ່ອງທ່ຽວໃນຄັ້ງນີ້ແມ່ນຈະໄດ້ສຳພາດຢູ່ 4 ພາກສ່ວນຄື:

**ພາກສ່ວນທີ 1:** ຂໍ້ມູນທົ່ວໄປກ່ຽວກັບນັກທ່ອງທ່ຽວໂດຍມີຂໍ້ມູນດ້ານເພດ, ອາຍຸ, ສະຖານະ, ອາຊີບ, ລະດັບການສຶກສາ ອື່ນໆ.

**ພາກສ່ວນທີ 2:** ຂໍ້ມູນກ່ຽວກັບພຶດຕິກຳຂອງນັກທ່ອງທ່ຽວທີ່ມາໃຊ້ບໍລິການເຮືອນຳທ່ຽວທີ່ທ່າເຮືອ

**ພາກສ່ວນທີ 3:** ຂໍ້ມູນກ່ຽວກັບຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ກັການໃຫ້ບໍລິການເຮືອນຳທ່ຽວ ເຊິ່ງປະກອບມີ 7 ດ້ານຄື: ຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການຂອງເຮືອນຳທ່ຽວ, ຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນຳທ່ຽວ, ການສະເໜີສິ່ງທີ່ເປັນຮູບປະທຳໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິກຳ, ການບໍລິການຂອງພະນັກງານຕໍ່ກັບຄວາມພໍໃຈຂອງນັກທ່ອງທ່ຽວ, ຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອ, ຄວາມພໍໃຈຕໍ່ຄ່າບໍລິການອື່ນໆຂອງນັກທ່ອງທ່ຽວ, ຄວາມຄິດເຫັນໃນການປັບປຸງການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ.

- **ເກນກຳນົດຊ່ວງຄະແນນ**

ເກນການກຳນົດຊ່ວງຄະແນນຄວາມເພິ່ງພໍໃຈສາມາດຄິດໄລ່ໄດ້ຕາມສູດດັ່ງນີ້:

ຈາກສູດ: ຊ່ວງຄະແນນ = $\frac{\text{ຄ່າຄະແນນສູງສຸດ} - \text{ຄ່າຄະແນນຕໍ່າສຸດ}}{\text{ຊ່ວງຄະແນນທີ່ແບ່ງ}}$

ແທນໄດ້: ຊ່ວງຄະແນນ = $\frac{5-1}{5} = 0.80$

**ຕາຕະລາງທີ 1 : ສະແດງຊ່ວງຄະແນນຄວາມພໍໃຈໃນການບໍລິການຂອງບຸກຄົນ**

| ຄະແນນ | ຄະແນນສະເລ່ຍ | ລ/ດຄວາມພໍໃຈ |
|---|---|---|
| 5 | 4.21-5.00 | ຫຼາຍທີ່ສຸດ |
| 4 | 3.41-4.20 | ຫຼາຍ |
| 3 | 2.61-3.40 | ປານກາງ |
| 2 | 1.81-2.60 | ໜ້ອຍ |

| | | |
|---|---|---|
| 1 | 1.00-1.80 | ໜ້ອຍທີ່ສຸດ |

## 3. ຜົນໄດ້ຮັບ

ຈາກການສຶກສາການບໍລິການເຮືອນຳທ່ຽວ ນະຄອນຫຼວງພະບາງຜົນອອກມາສາມາດສັງລວມຜົນໄດ້ຮັບ ໄດ້ດັ່ງນີ້:

### 3.1 ສະພາບລວມຂອງການບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ

ສະມາຄົມເຮືອ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໄດ້ເປີດໃຫ້ບໍລິການຕັ້ງແຕ່ປີ 1988 ເປັນເວລາ 31 ປີ. ການຂົນສົ່ງທາງນ້ຳເຊິ່ງລວມມີ ເຮືອເຮັດທຸລະກິດ, ເຮືອຂົນສົ່ງສິນຄ້າ-ຂົນສົ່ງໂດຍສານພາຍໃນແຂວງ ຫຼວງພະບາງ. ເຮືອແຕ່ລະລຳຈະຕ້ອງໄດ້ເສຍຄ່າພາສີອາກອນຕາມແຕ່ລະປະເພດເຮືອທຸກໆເດືອນຂອງທຸກໆປີ, ມີການຈັດແບ່ງຄິວເພື່ອຮັບເອົາຜູ້ໂດຍສານໄປຍັງສະຖານທີ່ທ່ອງທ່ຽວພາຍໃນຫຼວງພະບາງ ຫຼື ຕ່າງແຂວງ. ລູກຄ້າທີ່ມາໃຊ້ບໍລິການນັ້ນມີທັງລູກຄ້າພາຍໃນ ແລະ ຕ່າງປະເທດທີ່ມາໃຊ້ບໍລິການເປັນຈຳນວນຫຼວງຫຼາຍໃນແຕ່ລະມື້. ການໃຫ້ບໍລິການເຮືອນຳທ່ຽວແມ່ນການໃຫ້ບໍລິການອີກຮູບແບບໜຶ່ງໃນການຄົມມະນາຄົມຂົນສົ່ງຢູ່ຕາມລ້ອງແມ່ນ້ຳ ບໍ່ວ່າຈະເປັນການຮັບໃຊ້ພາຍໃນຄອບຄົວ, ຄ້າຂາຍ ແລະ ເຮັດທຸລະກິດກໍຕາມ ເຊິ່ງແມ່ນ້ຳຂອງກໍເປັນແມ່ນ້ຳທີ່ສຳຄັນຢູ່ໃນ ສ.ປ.ປ ລາວ, ນອກຈາກນີ້ ນັກທ່ອງທ່ຽວຍັງໃຫ້ຄວາມນິຍົມຫຼາຍໃນການໃຊ້ບໍລິການເຮືອນຳທ່ຽວສະຖານທີ່ທ່ອງທ່ຽວຕ່າງໆ ເນື່ອງຈາກວ່າສະພາບແວດລ້ອມໃນເວລາລ່ອງເຮືອສວຍງາມ, ເກີດມີຄວາມເພີດເພີນ ແລະ ມີເວລາເພີດເພີນກັບຄວາມງົດງາມຂອງທິວທັດທຳມະຊາດຕາມແມ່ນ້ຳຂອງ. ເຊິ່ງໄດ້ສ້າງລາຍຮັບໃຫ້ແກ່ປະຊາຊົນ ແລະ ບ້ານເມືອງຢ່າງມະຫາສານ.

ສະພາບການບໍລິການ ແລະ ການປະຕິບັດວຽກງານຂອງສະມາຄົມເຮືອນຳທ່ຽວໃນປັດຈຸບັນໄດ້ເລີ່ມໃຫ້ບໍລິການແບເປັນໜ່ວຍງານ ເປັນກຸ່ມເປັນກ້ອນ ມີຄວາມເປັນລະບຽບຮຽບຮ້ອຍ ໂດຍໃຫ້ນັກທ່ອງທ່ຽວ ຫຼື ຜູ້ໂດຍສານມາໃຊ້ບໍລິການຢູ່ສະມາຄົມເຮືອໄດ້. ແຂກຈະມີ 2 ປະເພດ ຄື: ແຂກແຜນ ແລະ ແຂກບຸກຄົນ, ປະເພດເຮືອມີ 2 ປະເພດ

ແຂກແຜນ ແລະ ແຂກບຸກຄົນ, ປະເພດເຮືອມີ 2 ປະເພດເຮືອບໍລິການ ຄື: ເຮືອສະເພາະຂອງສະມາຄົມ ແລະ ເຮືອບໍລິສັດ, ຂາຍປີ້ກໍຈະມີລາຄາ ຄົນລາວ ແລະ ຄົນຕ່າງປະເທດເຊິ່ງເລີ່ມເປີດບໍລິການຕັ້ງແຕ່ ວັນຈັນ-ວັນອາທິດ ເວລາ 8:00 ໂມງ ຫາ 16:00 ໂມງ. ເນື່ອງຈາກການເດີນທາງດ້ວຍເຮືອໃຊ້ເວລາປະມານ 2 ຊົ່ວໂມງ ເລີຍເຮັດໃຫ້ຄອບຄົວພີ່ນ້ອງ ໝູ່ເພື່ອນ ໄດ້ມີເວລາໂອ້ລົມກັນ, ເພີດເພີນ, ຊົມວິຖີການດຳລົງຊີວິດຂອງປະຊາຊົນລາວ, ບ້ານທ້ອງຖິ່ນດັ້ງເດີມ ແລະ ໄດ້ຊົມວິວແຄມນ້ຳ.

- ເຊິ່ງປັດຈຸບັນນະຄອນຫຼວງພະບາງມີເຮືອ 7 ປະເພດ ແລະ ຈຳນວນເຮືອທີ່ບໍລິການຕາມແມ່ນ້ຳຂອງ 280 ລຳ , ເຊິ່ງເຮືອນຳທ່ຽວມີ 125 ລຳ ລາຍລະອຽດດັ່ງລຸ່ມນີ້:

–ເຮືອທ່ອງທ່ຽວ 125 ລຳ (ມີທັງເຮືອຂອງສະມາຄົມ ແລະ ເຮືອຂອງເອກຊົນ) ມີ 3 ຂະໜາດຄື: ເຮືອຂະໜາດນ້ອຍ, ເຮືອຈະໜາດກາງ ແລະ ເຮືອຂະໜາດໃຫຍ່.

ໃນຈຳນວນເຮືອ 125 ລຳນີ້ ມີທັງເຮືອຂອງສະມາຄົມ ແລະ ຂອງເອກະຊົນລວມຢູ່ທີ່ໃຫ້ບໍລິການເຮືອຕາມແມ່ນ້ຳຂອງ ນະຄອນຫຼວງພະບາງ ແຂວງ ຫຼວງພະບາງ. ເຊິ່ງເຮືອຂອງເອກະຊົນມີ 10 ລຳ ດັ່ງລາຍລະອຽດລຸ່ມນີ້:

– ເຮືອໂດຍສານມີ 7 ລຳ: ບໍລິສັດແມ່ຂອງຄົ້ງດ່ອນມີ 3 ລຳ ສຳລັບ 100 ຄົນ ແລະ ຮັບນ້ຳໜັກໄດ້ 20 ໂຕນ, ທ້າວເພັດຈຳພອນ ມີ 2 ລຳ ສຳລັບ 90 ຄົນ ແລະ ຮັບນ້ຳໜັກໄດ້ 20 ໂຕນ, ທ້າວເພັດ ມີ 1 ລຳ ສຳລັບ 100 ຄົນ ຫຼື ຮັບນ້ຳໜັກໄດ້ 10 ໂຕນ, ນາງ ລຳພູນ ມີ 1 ລຳ ສຳລັບ 100 ຄົນ.

– ເຮືອທ່ອງທ່ຽວມີ 3 ລຳ: ບໍລິສັດແມ່ຂອງຄົ້ງດ່ອນມີ 1 ລຳ ສຳລັບ 8 ຄົນ ແລະ ຮັບນ້ຳໜັກໄດ້ 1 ໂຕນ, ນາງ ເພັດສະຫວັນ ມີ 1 ລຳ ສຳລັບ 22 ຄົນ ແລະ ຮັບນ້ຳໜັກໄດ້ 5 ໂຕນ ແລະ ພອນໄຊ (ໂຮງແຮມ ພູວ່າວ) ມີ 1 ລຳ ສຳລັບ 22 ຄົນ ແລະ ສາມາດຮັບນ້ຳໜັກໄດ້ 4 ໂຕນ.

ທ່າເຮືອຫຼວງ: ເປັນທ່າເຮືອບັກຂ້າມຟາກ, ເຮືອເໝົາ ແລະ ເປັນທ່າເຮືອສຳລັບແຂກແຜນແຕ່ລະໂຮງແຮມກັບບໍລິສັດ ເຊິ່ງ ເຮືອບັກມີ 15 ລຳ ມີ 5 ໜ່ວຍ , ເຮືອບໍລິສັດມີ 4 ລຳ ແລະ ເຮືອບຸກຄົນມີ 62 ລຳ (ແຕ່ເຮືອບຸກຄົນຈະປະຈຳຢູ່ແຕ່ລະບໍລິສັດ

### 3.2 ຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການໃຫ້ບໍລິການເຮືອນຳທ່ຽວຕາມແມ່ລຳນ້ຳຂອງ.

### 3.2.1 ຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການເຮືອນໍາທ່ຽວ

ຜົນຂອງການວິເຄາະອອກມາວ່າ: ສາຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການເຮືອນໍາທ່ຽວເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 3.98 . ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນຄວາມຊໍານິຊໍານານຂອງຄົນຂັບເຮືອ X= 4.16 , ຮອງລົງມາແມ່ນປະຕິບັດວຽກແລ້ວຕາມກໍານົດຢູ່ໃນລະດັບຫຼາຍ X= 4.01 ແລະ ໜ້ອຍແມ່ນມີຄວາມຖືກຕ້ອງດ້ານການຊໍາລະເງິນການບັນທຶກຂໍ້ມູນໃຫ້ລູກຄ້າຢູ່ໃນລະດັບຫຼາຍ X= 3.87 ຕາມລໍາດັບ.

### 3.2.2 ຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນໍາທ່ຽວ

ຜົນການສຶກສາຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນໍາທ່ຽວເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 3.98 ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນເຮືອໄດ້ອອກເດີນທາງ ແລະ ເຖິງຈຸດໝາຍ X= 4.13 , ຮອງລົງມາແມ່ນການບໍລິການຂອງຄົນຂັບເຮືອຢູ່ໃນລະດັບຫຼາຍ X= 3.98 ແລະ ໜ້ອຍທີ່ສຸດແມ່ນການປ້ອງກັນອຸບັດຕິເຫດຢູ່ໃນລະດັບຫຼາຍ X= 3.68 ຕາມລໍາດັບ.

### 3.2.3 ການຈັດການການບໍລິການເຮືອໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິການ

ຜົນການສຶກສາການຈັດການການບໍລິການເຮືອໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິການເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 3.77 ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນຄວາມສະອາດພາຍໃນເຮືອ ສະເລ່ຍ 3.95, ຮອງລົງມາແມ່ນການເກັບມ້ຽນຂີ້ເຫຍື້ອໃນລະຫວ່າງການເດີນທາງຢູ່ໃນລະດັບຫຼາຍ X= 3.76 ແລະ ໜ້ອຍທີ່ສຸດແມ່ນການປ້ອງກັນອຸບັດຕິເຫດຢູ່ໃນລະດັບຫຼາຍ X= 3.62 ຕາມລໍາດັບ.

### 3.2.4 ການບໍລິການຂອງພະນັກງານຕໍ່ກັບຄວາມພໍໃຈຂອງນັກທ່ອງທ່ຽວ

ຜ່ານການສຶກສາການບໍລິການຂອງພະນັກງານຕໍ່ກັບຄວາມພໍໃຈຂອງນັກທ່ອງທ່ຽວເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 3.66, ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນການໃຫ້ຄວາມຊ່ວຍເຫຼືອເມື່ອຕ້ອງການໃນລະຫວ່າງການເດີນທາງ X= 3.80 , ຮອງລົງມາແມ່ນການໃຫ້ຄວາມຊ່ວຍເຫຼືອໃນການຂຶ້ນ-ລົງເຮືອຢູ່ໃນລະດັບຫຼາຍ X= 3.73 ແລະ ໜ້ອຍທີ່ສຸດແມ່ນການນໍາໃຊ້ພາສາຢູ່ໃນລະດັບຫຼາຍ X= 3.55 ຕາມລໍາດັບ. ດັ່ງລາຍລະອຽດລຸ່ມນີ້:

### 3.2.5 ຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອ

ຜົນການສຶກສາຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 33.59. ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນພະນັກງານມີຄວາມເອົາໃຈໃສ່ຕໍ່ລູກຄ້າ X= 3.78, ຮອງລົງມາແມ່ນມະນຸດສໍາພັນຂອງພະນັກງານປະຈໍາສະມາຄົມເຮືອຢູ່ໃນລະດັບຫຼາຍ X= 3.64 ແລະ ໜ້ອຍທີ່ສຸດແມ່ນຫ້ອງນໍ້າຜູ້ໃຫ້ບໍລິການເຮືອໂດຍສານຢູ່ໃນລະດັບປານກາງ X= 3.37 ຕາມລໍາດັບ. ດັ່ງລາຍລະອຽດລຸ່ມນີ້:

### 3.2.6 ຄວາມພໍໃຈຕໍ່ຄ່າບໍລິການອື່ນໆຂອງນັກທ່ອງທ່ຽວ

ຜົນການສຶກສາຄວາມພໍໃຈຕໍ່ຄ່າບໍລິການອື່ນໆຂອງນັກທ່ອງທ່ຽວເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 3.67. ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນລາຄາເຮືອນໍາທ່ຽວ X = 3.80, ຮອງລົງມາແມ່ນລາຄາອາຫານຢູ່ໃນລະດັບຫຼາຍ X= 3.62 ແລະ ໜ້ອຍທີ່ສຸດແມ່ນລາຄາເຄື່ອງດື່ມຢູ່ໃນລະດັບຫຼາຍ X= 3.61 ຕາມລໍາດັບ. ດັ່ງລາຍລະອຽດລຸ່ມນີ້:

### 3.2.7 ການສົມທຽບຄວາມພໍໃຈຂອງນັກທ່ອງທ່ຽວທັງ 6 ດ້ານ ດັ່ງລາຍລະອຽດລຸ່ມນີ້:

ຜົນການສຶກສາການສົມທຽບຄວາມພໍໃຈຂອງນັກທ່ອງທ່ຽວທັງ 6 ດ້ານເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X 3.77 . ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການເຮືອນໍາທ່ຽວ,ຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນໍາທ່ຽວ X = 3.98, ຮອງລົງມາແມ່ນການຈັດການການບໍລິການເຮືອໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິການຢູ່ໃນລະດັບຫຼາຍ X = 3.77 ແລະ ໜ້ອຍທີ່ສຸດຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອຢູ່ໃນລະດັບຫຼາຍ X = 3.59 ຕາມລໍາດັບ. ດັ່ງລາຍລະອຽດລຸ່ມນີ້:

### 3.3 ຄວາມຄິດເຫັນໃນການປັບປຸງ ການໃຫ້ບໍລິການ ເຮືອນຳທ່ຽວຕາມແມ່ນ້ຳຂອງ

ຜົນການສຶກສາສິ່ງທີ່ຄວນປັບປຸງໃນການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງເຫັນວ່າໂດຍລວມແມ່ນຢູ່ໃນລະດັບຫຼາຍ X= 3.47. ຖ້າທຽບໃສ່ຫຼາຍດ້ານເຫັນວ່າຫຼາຍກວ່າໝູ່ຢູ່ໃນລະດັບຫຼາຍແມ່ນສະພາບເຮືອໂດຍສານ X= 3.62, ຮອງລົງມາແມ່ນການໃຫ້ບໍລິການຂອງພະນັກງານພາຍໃນເຮືອນຳທ່ຽວຢູ່ໃນລະດັບຫຼາຍ X= 3.53 ແລະ ໜ້ອຍທີ່ສຸດແມ່ນສິ່ງອຳນວຍຄວາມສະດວກໃນລະດັບປານກາງ X= 3.32 ຕາມລຳດັບ. ດັ່ງລາຍລະອຽດລຸ່ມນີ້:

### 4. ວິພາກຜົນ

ຈາກການສຶກສາກ່ຽວກັບການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ ນະຄອນຫຼວງພະບາງ ແຂວງ ຫຼວງພະບາງ ໂດຍມີຈຸດປະສົງຄື: ສຶກສາສະພາບຂອງການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ ແລະ ສຶກສາຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການໃຫ້ບໍລິການເຮືອນຳທ່ຽວຕາມແມ່ລຳນ້ຳຂອງ.

ການສອບຖາມນັກທ່ອງທ່ຽວທີ່ມາໃຊ້ບໍລິການເຮືອນຳທ່ຽວແມ່ນໄດ້ກຳນົດເອົາ 180 ສະບັບ ຈາກຜູ້ທີ່ມາໃຊ້ບໍລິການເຮືອທ່ອງທ່ຽວຕົວຈິງ.

ການສຶກສາພົບວ່າ: ວຽກງານຫຼັກໆໃນການໃຫ້ບໍລິການເຮືອປະກອບມີເຮືອຂອງສະມາຄົມ ແລະ ເຮືອຂອງບໍລິສັດ ເຊິ່ງເປີດໃຫ້ບໍລິການແຕ່ ວັນຈັນ-ວັນອາທິດ, ເຮືອປະກອບມີ 7 ປະເພດ, ເຮືອແຕ່ລະປະເພດທັງໝົດມີ 280 ລຳ ໃນຈຳນວນນີ້ເຮືອທ່ອງທ່ຽວມີ 125 ລຳ ທັງເຮືອຂອງບໍລິສັດອີກ 10 ລຳ, ໂດຍທີ່ເຮືອຂອງສະມາຄົມແມ່ນມີການຈັດຄິວ ແລະ ເຮືອຂອງບໍລິສັດແມ່ນໄດ້ເຊັນສັນຍາກັບໂຮງແຮມ, ບໍລິສັດທ່ອງທ່ຽວ ແລະ ອື່ນໆ.

ຜົນການສຶກສາຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງ ຈາກການວິເຄາະຜົນການສຶກສາເຫັນວ່ານັກທ່ອງທ່ຽວມີຄວາມພໍໃຈທັງ 7 ດ້ານເຫັນວ່າ: ມີຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການຂອງເຮືອນຳທ່ຽວ, ຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນຳທ່ຽວຢູ່ໃນລະດັບຫຼາຍ, ມີການສະເໜີສິ່ງທີ່ເປັນຮູບປະທຳໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິການຢູ່ໃນລະດັບຫຼາຍ, ການບໍລິການຂອງພະນັກງານຕໍ່ກັບຄວາມພໍໃຈຂອງນັກທ່ອງທ່ຽວຢູ່ໃນລະດັບຫຼາຍ, ຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອຢູ່ໃນລະດັບຫຼາຍ, ຄວາມພໍໃຈຕໍ່ຄ່າບໍລິການອື່ນໆຂອງນັກທ່ອງທ່ຽວຢູ່ໃນລະດັບຫຼາຍ ແລະ ສິ່ງທີ່ຄວນປັບປຸງໃນການໃຫ້ບໍລິການເຮືອນຳທ່ຽວຕາມແມ່ນ້ຳຂອງຢູ່ໃນລະດັບຫຼາຍ ເມື່ອສົມທຽບໃສ່ຜົນການສຶກສາຂອງ ມາຣິສາ ໄກຽ (2009) ສຶກສາຄວາມເພິ່ງພໍໃຈຂອງຂອງຜູ້ໂດຍສານຕໍ່ການໃຫ້ບໍລິການລົດໂດຍສານປັບອາກາດປະຈຳເສັ້ນທາງ ເຊິ່ງຈະເຫັນຄວາມແຕກຕ່າງທາງດ້ານພາບລວມ ປະຊາຊົນມີຄວາມພໍໃຈຕໍ່ການໃຊ້ບໍລິການລົດໂດຍສານປະຈຳທາງຢູ່ໃນລະດັບຄວາມພໍໃຈຫຼາຍ ແລະ ເມື່ອພິຈາລະນາເປັນໝວດພົບວ່າໝວດທີ່ມີຄ່າສະເລ່ຍສູງສຸດແມ່ນ ໄລຍະເວລາໃນການເດີນທາງ, ຮອງລົງມາແມ່ນຄວາມສະດວກຂະນະໃຊ້ບໍລິການ, ຄວາມປອດໄພໃນການໃຫ້ບໍລິການ, ຄວາມສະດວກຜູ້ໃຫ້ບໍລິການລົດໂດຍສານຕາມລຳດັບ ແລະ ໝວດທີ່ມີຄ່າສະເລ່ຍໜ້ອຍສຸດແມ່ນ ອັດຕາຄ່າໂດຍສານ ແລະ ສອດຄ່ອງກັບການຄົ້ນຄວ້າຂອງ ສຸດາ ສຸວັນນາພິລົມ (2017) ໃນການສຶກສາພຶດຕິກຳ ແລະ ຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວຕໍ່ການທ່ອງທ່ຽວເກາະຊ້າງ ຈັງຫວັດຕາດພົບວ່າ: ນັກທ່ອງທ່ຽວໄທມີຄວາມເພິ່ງພໍໃຈຕໍ່ພະລິດຕະພັນບໍລິການໃນເລື້ອງແຫຼ່ງທ່ອງທ່ຽວ ຮອງລົງມາປັດໃຈທີ່ຕັ້ງຂອງເກາະ ແລະ ປັດໃຈໂຄງສ້າງສິ່ງອານວຍຄວາມສະດວກສະຫວັດດີການສຳລັບນັກທ່ອງທ່ຽວ, ນັກທ່ອງທ່ຽວຊາວຕ່າງປະເທດສ່ວນຫຼາຍເພິ່ງພໍໃຈກັບການບໍລິການ, ປະເພນີ ແລະ ວັດທະນະທຳ ລອງແມ່ນການສິ່ງເສີມ ແລະທາເລຂອງເກາະ ຕາມລຳດັບ, ເມື່ອປຽບທຽບກັນແລ້ວສະແດງໃຫ້ເຫັນວ່າ: ມີຄວາມແຕກຕ່າງກັນບໍ່ວ່າຈະເປັນດ້ານປະເພດການບໍລິການ, ການສຶກສາ, ການເກັບຂໍ້ມູນ, ການກຳນົດກຸ່ມປະຊາກອນຕົວຢ່າງ, ສະຖານທີ່ທ່ອງທ່ຽວ ແລະ ການວິເຄາະຂໍ້ມູນ. ລະດັບຄວາມພໍໃຈຂອງນັກທ່ອງທ່ຽວ ຫຼື ຜູ້ໂດຍສານ ກໍມີຄວາມມັກທີ່ແຕກຕ່າງກັນ. ສະນັ້ນ, ຜົນຂອງການສຶກສາ ແລະ ວິເຄາະຂໍ້ມູນຈຶ່ງແຕກຕ່າງກັນ ເມື່ອທຽບກັບບົດຂອງ ອານຸພາບ ມີສົມ ພ້ອມດ້ວຍທີມງານໃນົວຂໍ້ພຶດຕິກຳການທ່ອງທ່ຽວທາງເຮືອສຳລານຂອງນັກທ່ອງທ່ຽວໃນເຂດກຸງເທບມະຫານະຄອນພົບວ່າ : ຄ່າສະເລ່ຍໂດຍລວມຂອງລະດັບຄວາມຄິດເຫັນ, ທັດສະນະຄະຕິຂອງນັກທ່ອງທ່ຽວທາງເຮືອສຳລານດ້ານພຶດຕິກຳສະແດງອອກຢູ່ໃນລະດັບສຳຄັນຫຼາຍ ມີທັງໝົດ 5 ລາຍການປະກອບດ້ວຍ ຄ່າໃຊ້ຈ່າຍ, ແລະ ເສັ້ນທາງຂອງເຮືອ ກ່ອນ

ການເດີນທາງ,ຂໍ້ມູນບໍລິສັດເຮືອສໍາລານ, ສຶກສາຂໍ້ມູນສະພາບອາກາດກ່ອນການເດີນທາງ, ສຶກສາຂໍ້ມູນເວລາກ່ອນການເດີນທາງ ແລະ ການທ່ອງທ່ຽວທາງເຮືອສາລານ ຊອກຫາຂໍ້ມູນຕາມອິນເຕີເນັດ ຕາມລໍາດັບ ສະຫຼຸບຜົນຂອງຂໍ້ມູນໂດຍລວມຂອງປັດໄຈທັດສະນະຄະຕິຈາກການສຶກສາຂໍ້ມູນພົບວ່າຄ່າສະເລ່ຍໂດຍລວມຂອງລະດັບຄວາມສໍາຄັນຂອງປັດໄຈດ້ານທັດສະນະຄະຕິກ່ຽວກັບການທ່ອງທ່ຽວເຮືອສໍາລານຂອງປະຊາກອນໃນເຂດກຸງເທບມະຫານະຄອນຢູ່ໃນລະດັບຄວາມສໍາຄັນມີຢູ່ 3 ລາຍການ ຄື: 1) ດ້ານພຶດຕິກາສະແດງອອກ (Conative or Behavior), 2) ດ້ານຄວາມຮູ້ຄວາມເຂົ້າໃຈ (Cognitive or Belief) ແລະ 3) ດ້ານຄວາມຮູ້ສຶກ (Affective or Feeling) ຕາມລໍາດັບ

## 5. ສະຫຼຸບ

ເຮືອທ່ອງທ່ຽວເປັນເຮືອອີກປະເພດໜຶ່ງທີ່ໃຫ້ບໍລິການມີ 3 ຂະໜາດມີ 280 ລໍາ ຄື: ເຮືອຂະ ໜາດນ້ອຍ, ເຮືອຂະໜາດກາງ ແລະ ເຮືອຂະໜາດໃຫຍ່. ເຮືອທ່ອງທ່ຽວ 125 ລໍາ (ມີທັງເຮືອຂອງສະມາຄົມ ແລະ ເຮືອຂອງເອກຊົນ), ໃນຈໍານວນເຮືອ 125 ລໍານີ້ ມີທັງເຮືອຂອງສະມາຄົມ ແລະ ຂອງເອກະຊົນ. ເຊິ່ງລວມເຮືອຂອງເອກະຊົນມີ 10 ລໍາ.

ຜົນການສຶກສາຄວາມພໍໃຈຂອງນັກທ່ອງຕໍ່ການໃຫ້ບໍລິການເຮືອນໍາທ່ຽວຕາມແມ່ນໍ້າຂອງ ຈາກການວິເຄາະຜົນການສຶກສາເຫັນວ່ານັກທ່ອງທ່ຽວມີຄວາມພໍໃຈທັງ 7ດ້ານ ເຫັນວ່າ: ມີຄວາມພໍໃຈຂອງນັກທ່ອງທ່ຽວຕໍ່ການບໍລິການຂອງເຮືອນໍາທ່ຽວ, ຄວາມໝັ້ນໃຈຂອງລູກຄ້າຕໍ່ການໃຫ້ບໍລິການເຮືອນໍາທ່ຽວຢູ່ໃນລະດັບຫຼາຍ, ມີການສະເໜີສິ່ງທີ່ເປັນຮູບປະທໍາໃຫ້ແກ່ນັກທ່ອງທ່ຽວທີ່ມາໃຊ້ບໍລິການຢູ່ໃນລະດັບຫຼາຍ, ການບໍລິການຂອງພະນັກງານຕໍ່ກັບຄວາມພໍໃຈຂອງນັກທ່ອງທ່ຽວຢູ່ໃນລະດັບຫຼາຍ, ຄວາມພໍໃຈຕໍ່ການບໍລິການຂອງພະນັກງານພາຍໃນເຮືອຢູ່ໃນລະດັບຫຼາຍ, ຄວາມພໍໃຈຕໍ່ຄ່າບໍລິການອື່ນໆຂອງນັກທ່ອງທ່ຽວຢູ່ໃນລະດັບຫຼາຍ ແລະ ສິ່ງທີ່ຄວນປັບປຸງໃນການໃຫ້ບໍລິການເຮືອນໍາທ່ຽວຕາມແມ່ນໍ້າຂອງຢູ່ໃນລະດັບຫຼາຍ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄໍາຂອບໃຈ

ຂໍສະແດງຄວາມຂອບໃຈ ແລະ ຮູ້ບູນຄຸນມາຍັງ ຄະນະນໍາ ມະຫາວິທະຍາໄລສຸພານຸວົງ, ຄະນະນໍາ ຄະນະກະເສດສາດ ຄູ-ອາຈານພາຍໃນພາກວິຊາວິທະຍາສາດການລ້ຽງສັດ ທີ່ເອື້ອອານວຍຄວາມສະດວກທາງດ້ານສະຖານທີ່ໃນຄົ້ນຄວ້າທົດລອງ ແລະ ໃຫ້ໂອກາດແກ່ພວກຂ້າພະເຈົ້າໄດ້ເຜີຍແຜ່ຜົນງານການຄົ້ນຄວ້າທົດລອງໃນຄັ້ງນີ້ດ້ວຍ.

## 8. ເອກກະສານອ້າງອີງ

ກະຊວງຖະແຫຼງຂ່າວ. (2006). ປື້ມການທ່ອງທ່ຽວ, ຄວາມໝາຍຂອງການທ່ອງທ່ຽວ.

ການທ່ອງທ່ຽວແຫ່ງປະເທດໄທ. (2558). ການສໍາຫຼວດພຶດຕິກໍານັກທ່ອງທ່ຽວຊາວໄທ ກຸງເທບ, ການທ່ອງທ່ຽວແຫ່ງປະເທດໄທ.

ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ. (2012). ຄູ່ມືການຈັດສັນແຫຼ່ງທ່ອງທ່ຽວໃນ ສປປ ລາວ ມັງກອນ.

ຄິດວິໄລ ອ່ອນຍິ້ມ. (2557). ທັດສະນະຄະຕິ ແລະ ພຶດຕິກໍາຂອງນັກທ່ອງທ່ຽວຂອງຊາວໄທ ຕໍ່ກັບການທ່ອງທ່ຽວອຸດທິຍານເມືອງເກົ່າ.

ຈະລິນ ແຊ່ວອງ. (2556). ພຶດຕິການັກທ່ອງທ່ຽວ, ສົງຂາ: ຄະນະວິທະຍາການຈັດການ, ມະຫາວິທະຍາໄລລາດຊະພັດສົງຂາ.

ສຸດາ ສຸວັນນາພິລົມ. (2017). ພຶດຕິກາ ແລະ ຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວຕໍ່ການທ່ອງທ່ຽວເກາະຊ້າງຈັດຫວັດຕາດ, *Panyapiwat Journal*, 9(3), 69-79.

ສິລິວອນ ເສດວິລັດ. (2550). ພຶດຕິກໍານັກທ່ອວທ່ຽວ (ກຸງເທບມະຫານະຄອນ).

ສິລິວອນ ເສດວິລັດ. (2550). ກົນລະຍຸດການຕະຫຼາດ ແລະ ບໍລິການເຊີງກົນລະຍຸດໂດຍມຸ້ງທີ່ຕະຫຼາດ(ກຸງເທບມະຫານະຄອນ) : Diamond Basiness World.

ສຸຈິດຕາ ໄຊຍະຈັນ. (2559). ທັດສະນະຄະຕິຕໍ່ນັກທ່ອງທ່ຽວໃນປະເທດໄທ ແລະ ແນວໂນ້ມພຶດຕິກາ

ການທ່ອງທ່ຽວຂອງລຸ່ມ Baby Boomer ໃນເຂດ ກຸງເທບມະຫານະຄອນ ແລະ ປະລິມົນທົນ.
ສຸລະພອນ ມຸນກຸນນີ ແລະ ໄພທູນ ມົນພານທອງ. (2562). ພຶດຕິກຳ ແລະ ຄຸນລັກສະນະຂອງນັກທ່ອງທ່ຽວ ເຮືອສຳລານໃນການເດີນເຮືອທ່ອງທ່ຽວຍັງທ່າເຮືອ ປະເທດໄທ.
ບົວພັນ ວິໄລພອນ. (2017). ຄວາມຄິດເຫັນຂອງນັກທ່ອງທ່ຽວຕໍ່ກັບຄຸນນະພາບການໃຫ້ບໍລິການຂອງ ພະນັກງານນຳທ່ຽວ ບໍລິສັດທ່ອງທ່ຽວເອເຊຍລິວຽວ , ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫະວິທະຍາໄລສຸພານຸວົງ.
ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ຫຼວງພະບາງ. (2010). ກົດລະບຽບວ່າດ້ວຍການຄຸ້ມຄອງເຮືອ ເຮັດທຸລະກິດຂົນສົ່ງສິນຄ້າ-ຂົນສົ່ງໂດຍສານທາງນ້ຳ ແຂວງ ຫຼວງພະບາງ ສະບັບເລກທີ 564/ຍທຂ ລົງວັນທີ 19/05/2010.
ເພັນໃຈ ອິງທະພັນ. (2016). ຄວາມພໍໃຈຂອງຜູ້ໂດຍສານທີ່ມີຄຸນນະພາບການໃຫ້ບໍລິການຂອງສະຖານີລົດເມ ເມືອງ ຊາເໜືອ ແຂວງ ຫົວພັນ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫະວິທະຍາໄລສຸພານຸວົງ.
ມາຣິສາ ໄກງູ. (2009). ຄວາມເພິ່ງພໍໃຈຂອງຜູ້ໂດຍສານຕໍ່ການໃຊ້ບໍລິການລົດຕູ້ມະຫາວິທະຍາໄລກຸງເທບ.
ວິໄລພອນ ສີມສະໝອນ. (2020). ການຄຸ້ມຄອງໃຫ້ບໍລິການທຸລະກິດໂຮງແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ. ວາລະສານມະຫາວິທະຍາໄລສຸພານຸວົງ, ເຫຼັ້ມທີ *6ສະບັບທີ* (1), ປີ 2020 ໜ້າ 162-168.
ອານຸພາບ ມີສິນ (ພ້ອມດ້ວຍທີມງານ). (2019). ພຶດຕິກາການທ່ອງທ່ຽວທາງເຮືອສຳລານຂອງນັກທ່ອງທ່ຽວ ໃນເຂດກຸງເທບ Humanities and Social Science Research Promotion Network Journal Volume 2 Issue 2
ອັດສະລາ ຊິວະຕະກຸນກິດ. (2561). ພຶດຕິກາຜູ້ບໍລິໂພກການທ່ອງທ່ຽວເຮືອສຳລານ ແລະ ການໃຫ້ບໍລິການ ໃຫ້ບໍລິການຂອງຜູ້ປະກອບການຖຸລະກິດເຮືອ ສຳລານໃນກຸ່ມທ່ອງທ່ຽວອັນດາມັນ. ວາລະສານການຈັດການສະໃໝໃໝ່, *16*(1).